# ໃບກຽດຕິຄຸນ

ການດຳເນີນການວິໄຈເລື່ອງ ພັດທະນາທັກສະການອ່ານໂດຍໃຊ້ແບບຝຶກທັກສະການອ່ານພາສາອັງກິດ ສຳລັບນັກສຶກສາສາຍພາສາອັງກິດ ລະບົບ 12 + 4 ປະລິນຍາຕີ ປີ 4 ວິທະຍາໄລຄູສາລະວັນໃນຄັ້ງນີ້ສຳເລັດໄດ້ຍ້ອນໄດ້ຮັບການຮ່ວມມື ແລະ ຄວາມຊ່ວຍເຫຼືອຈາກຫຼາຍພາກສ່ວນທີ່ໄດ້ທຸ້ມເທເຫື່ອແຮງ ແລະ ສະຕິປັນຍາໃນການສະໜອງຂໍ້ມູນ ແລະໃຫ້ຄຳແນະນຳຈົນເຮັດໃຫ້ບົດວິໄຈຂອງພວກຂ້າພະເຈົ້າໄດ້ຮັບຜົນສຳເລັດຕາມຈຸດປະສົງທີ່ວາງໄວ້.

ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງພໍ່ ແມ່ ອ້າຍ ເອື້ອຍນ້ອງຕະຫຼອດຮອດຄອບຄົວທີ່ໄດ້ໃຫ້ກຳລັງໃຈ ແລະ ສະໜັບສະໜູນໃນທຸກໆດ້ານ.

ຂໍສະແດງຄວາມຂອບໃຈມາຍັງ ປອ ໂພທອງ ພົງສິງຄາມ ແລະ ອາຈານ ນາງ ສົມປອງ ແສນທະວິສຸກ ທີ່ປຶກສາທີ່ຊ່ວຍເຫຼືອມາຕະຫຼອດ ແລະ ໄດ້ທຸ້ມເທສະຕິປັນຍາ ເພື່ອມາຖ່າຍທອດໃຫ້ແກ່ຂ້າພະເຈົ້າຢ່າງບໍ່ຮູ້ອິດຮູ້ເມື່ອຍ, ພ້ອມທັງໃຫ້ຄຳແນະນຳປຶກສາຫາລື ປັບປຸງ ແລະ ກວດແກ້, ຊອກຫາແຫຼ່ງຂໍ້ມູນທີ່ສຳຄັນມາໃຫ້, ແລະ ປະກອບຄຳຄິດຄຳເຫັນໃນການຂຽນບົດວິໄຈໃນຄັ້ງນີ້ຈົນສົມບູນຂຶ້ນ.ສິ່ງດັ່ງກ່າວໄດ້ເພີ່ມພູນຄວາມຮູ້ໃຫ້ແກ່ຂ້າພະເຈົ້າຢ່າງເປັນລະບົບທາງດ້ານວິທະຍາສາດ.ພວກຂ້າພະເຈົ້າຂໍສະແດງຄວາມຂອບໃຈເປັນຢ່າງສູງ.

ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງມາຍັງອົງການຈັດຕັ້ງທຸກຂັ້ນ, ເພື່ອນມິດສະຫາຍພາຍໃນຫ້ອງການພາສາຕ່າງປະເທດເປັນຜູ້ຊ່ວຍເຫຼືອດ້ານເທັກນິກການຈັດພິມທຸກດ້ານ ແລະ ທຸກໆທ່ານ ທີ່ໄດ້ປະກອບສ່ວນທີ່ນຮອນອັນລ້ຳຄ່າບໍ່ວ່າທາງດ້ານວັດຖຸກໍ່ຄືຈິດໃຈອັນປະເສີດໃນການອຳນວຍຄວາມສະດວກໃຫ້ແກ່ການດຳເນີນການວິໄຈໃນຄັ້ງນີ້ດ້ວຍ.

# ບົດຄັດຫຍໍ້

ການສຶກສາການພັດທະນາທັກສະການອ່ານໂດຍການນໍາໃຊ້ແບບເຝິກທັກສະການອ່ານພາສາອັງກິດ ຈຸດປະສົງແມ່ນເພື່ອ ພັດທະນາແບບຝຶກທັກສະການອ່ານໃຫ້ມີປະສິດທິພາບຕາມເກນ 80/80 ແລະ ສົມທຽບປະສິດທິພາບຜົນການນໍາໃຊ້ເຄື່ອງມືໂດຍການວັດ ກ່ອນ ແລະ ຫຼັງການໃຊ້ແບບຝຶກທັກສະການອ່ານໃນການຮຽນ ຂອງນັກສຶກສາ ສາຍພາສາອັງກິດ ລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນໃນປີ2018 ໃນມີຈໍານວນ 25 ຄົນ ເຊິ່ງໄດ້ໃຊ້ວິທີເລືອກແບບເຈາະຈົງ (Purposive Sampling). ເຄື່ອງມືທີ່ໃຊ້ເຂົ້າໃນການວິໄຈປະກອບມີ ບົດທົດສອບ 1 ຊຸດໆລະ 30 ຂໍ້ ເພື່ອໃຊ້ທົດສອບກ່ອນ ແລະ ຫຼັງການຮຽນ. ບົດທົດສອບນີ້ເປັນແບບປາລະໄນ ແລະ ມີ 3 ຕົວເລືອກ, ແບບຝຶກທັກສະການອ່ານພາສາອັງກິດທັງໝົດມີ 3 ຊຸດ; ຊຸດລະ 10 ຂໍ້ ເປັນແບບຝຶກປະເພດຈັບຄູ່ລະຫວ່າງຄໍາສັບກັບນິຍາມ, ອ່ານ ແລະ ຕອບຄໍາຖາມ, ອ່ານ ແລະ ຕື່ມຄໍາສັບໃສ່ບ່ອນຫວ່າງ. ຫຼັງຈາກນັ້ນກໍ່ຊອກຫາຄ່າສະເລ່ຍ ($\bar{x}$) ແລະ ເປີເຊັນ (P) ປະສິດທິພາບຂອງແບບເຝິກໂດຍນໍາໃຊ້ສູດ $E_1/E_2$ ຕາມເກນ 80/80. **ຜົນການວິໄຈພົບວ່າ**ການພັດທະນາທັກສະການອ່ານພາສາອັງກິດໂດຍນໍາໃຊ້ແບບເຝິກທັກສະຢູ່ໃນລະດັບດີຖ້າທຽບໃສ່ຜົນຄະແນນຕົວຈິງ ຂອງການວິເຄາະກ່ອນ ແລະ ຫຼັງຮຽນ ເຊິ່ງເຫັນໄດ້ວ່າຄະແນນກ່ອນຮຽນມີຄ່າສະເລ່ຍ 14, 96 ເທົ່າກັບ 49,87 % ແລະ ຄະແນນຫຼັງຮຽນມີຄ່າສະເລ່ຍ 27,72 ເທົ່າກັບ 92,40%. ເຫັນໄດ້ຄວາມກ້າວໜ້າກ່ອນຮຽນຈາກຜົນການຮຽນແມ່ນ 12,76 ເທົ່າກັບ 42,53 %. ປະສິດທິພາບແບບເຝິກທັກສະການອ່ານພາສາອັງກິດໂດຍໃຊ້ແບບຝຶກຈໍານວນ 3 ຊຸດ, ສະແດງວ່າແບບເຝິກທັກສະມີປະສິດທິພາບສູງຖ້າທຽບໃສເກນ $E_1$ 80 / $E_2$ 92,40 (ຄ່າ $E_2$ ສູງກວ່າເກນທີ່ຕັ້ງໄວ້ 80/80).

# ສາລະບານ

ໃບກຽດຕິຄຸນ ........................................................................................ I

ບົດຄັດຫຍໍ້........................................................................................ II

ສາລະບານ........................................................................................ III

ສາລະບານຕາຕະລາງ ........................................................................................ VI

ບົດທີ 1........................................................................................ 1

ບົດນຳ........................................................................................ 1

1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ ........................................ 1

1.2 ຈຸດປະສົງຂອງການວິໄຈ ........................................................................2

1.3. ສົມມຸດຖານການວິໄຈ ........................................................................3

1.4. ຂອບເຂດຂອງການວິໄຈ ........................................................................3

ກ. ປະຊາກອນ ........................................................................3

ຂ. ກຸ່ມຕົວຢ່າງ ........................................................................3

ຄ. ເນື້ອໃນທີ່ຈະເຮັດການວິໄຈ. ........................................................................3

ງ. ຂອບເຂດທາງດ້ານຕົວປ່ຽນ. ........................................................................3

1.5. ນິຍາມສັບສະເພາະ........................................................................3

1.6. ປະໂຫຍດທີ່ຄາດວ່າຈະໄດ້ຮັບ. ........................................................................4

ບົດທີ 2 ........................................................................................5

ແນວຄິດທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງ........................................................................5

2.1. ໃນການວິໄຈຄັ້ງນີ້ຜູ້ວິໄຈໄດ້ສຶກສາຄົ້ນຄວ້າເອກະສານທີ່ທີ່ກ່ຽວຂ້ອງກັບການພັດທະນາການອ່ານ ໂດຍນຳໃຊ້ແບບເຝິກທັກສະ ດັ່ງນີ້: ........................................................................5

2.2. ຄວາມໝາຍຂອງການອ່ານ. ........................................................................5

2.3. ຄວາມສຳຄັນຂອງການອ່ານ. ........................................................................6

2.4. ປະເພດຂອງການອ່ານ ........................................................................6

2.5. ຄຸນປະໂຫຍດຂອງການອ່ານ ........................................................................6

2.6. ທັກສະການອ່ານ ........................................................................7

2.7. ຈຸດມຸ່ງໝາຍໃນການອ່ານ........................................................................8

2.8. ວິທີສິດສອນການອ່ານ..........8
2.9. ຫຼັກການຈັດກິດຈະກຳການອ່ານ..........9
2.10. ປະເພດການຈັດກິດຈະກຳສົ່ງເສີມການອ່ານ..........10
2.11. ການວັດ ແລະ ປະເມີນຜົນດ້ານການອ່ານ..........10
2.12. ຫຼັກການສ້າງແບບຝຶກທັກສະ..........11
2.13. ຮູບແບບຂອງການຝຶກທັກສະ..........11
2.14 ລັກສະນະຂອງແບບຝຶກທັກສະທີ່ດີ..........12
ງານວິໄຈທີ່ກ່ຽວຂ້ອງ..........12
1. ການວິໄຈກ່ຽວກັບຍຸດທະວິທີການອ່ານ( Reading stategy)..........12
2. ການວິໄຈກ່ຽວກັບການນຳໃຊ້ແບບຝຶກທັກສະ..........14
ບົດທີ 3..........15
ວິທີດຳເນີນການວິໄຈ..........15
3.1. ປະຊາກອນ ແລະ ກຸ່ມຕົວຢ່າງ..........15
3.2. ເຄື່ອງມື ແລະ ວິທີ່ການສ້າງເຄື່ອງມື..........15
3.3. ການສ້າງ ແລະ ຫາຄຸນນະພາບຂອງເຄື່ອງມື..........16
3.4. ການສ້າງແບບທົດສອບວັດຜົນສຳເລັດທາງການຮຽນເລື່ອງ:ທັກສະການອ່ານຜູ້ສຶກສາຈະໄດ້ດຳເນີນຕາມລຳດັບດັ່ງນີ້ :..........16
3.5. ການເກັບລວບລວມຂໍ້ມູນ..........17
3.6. ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້..........17
ການວິເຄາະຂໍ້ມູນ..........17
ສະຖິຕິໃນການວິເຄາະຂໍ້ມູນ...........17
ບົດທີ 4..........19
ຜົນການວິເຄາະຂໍ້ມູນ..........19
ບົດທີ 5..........22
ສະຫຼຸບ, ອະພິປາຍ ແລະ ຂໍ້ສະເໜີແນະ..........22
ສະຫຼຸບຜົນການວິໄຈ..........22
5.1. ອະພິປາຍຜົນການວິໄຈ..........22
5.2. ຂໍ້ສະເໜີແນະໃນການນຳຜົນວິໄຈໄປໃຊ້..........23

5.3. ຂໍ້ສະເໜີແນະໃນການວິໄຈຄັ້ງຕໍ່ໄປ........................................................................24
ເອກະສານອ້າງອີງ........................................................................................25
ເອກະສານຊ້ອນທ້າຍ......................................................................................27
ເຄື່ອງມື.........................................................................................................28
Lesson plan ........................................................................................ 29
Pre- Post Examination ........................................................................ 33
Key Pre- Post examination ................................................................. 39
Worksheet 1 ......................................................................................... 45
Key  Worksheet 1 ................................................................................ 46
Worksheet 2 ......................................................................................... 47
Key Worksheet 2 ................................................................................. 48
Worksheet 3 ......................................................................................... 49
Key Worksheet 3 ................................................................................. 50
Worksheet 4 ......................................................................................... 51
Key   Worksheet 5 ............................................................................... 54
Worksheet 6 ......................................................................................... 57
Key Worksheet 6 ................................................................................. 59
Worksheet 7 ......................................................................................... 61
Key Worksheet 7 ................................................................................. 63
Worksheet 8 ......................................................................................... 65
Key Worksheet 8 ................................................................................. 66
Worksheet 9 ......................................................................................... 67
Key Worksheet 9 ................................................................................. 68
ປະຫວັດຜູ້ວິໄຈ.................................................................................................75

# ສາລະບານຕາຕະລາງ

ຕາຕະລາງ1 ປຽບທຽບຄວາມແຕກຕ່າງຂອງຄະແນນກ່ອນແລະ ຫຼັງໃຊ້ແບບເຝິກ……………………......20
ຕາຕະລາງ 2ວິເຄາະປະສິດທິພາບການນຳໃຊ້ແບບເຝິກທັກສະລະຫວ່າງຮຽນ ແລະ ຫຼັງຮຽນ................21

# ບົດທີ 1
# ບົດນຳ

## 1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ

ປະຈຸບັນນີ້ພາສາອັງກິດເປັນພາສາທີ່ສາກົນໃຊ້ກັນຢູ່ທົ່ວໂລກບໍ່ວ່າຈະໃຊ້ໃນການຕິດຕໍ່ສື່ສານໃນຊີວິດປະຈຳວັນໃນດ້ານທຸລະກິດການຄ້າ ແລະ ການທ່ອງທ່ຽວ ແລະ ອີກປະເທດລາວກໍ່ໄດ້ເຂົ້າເປັນສະມາຊິກ ປະຊາຄົມອາຊຽນ( Asean Economics Community ) ຫຼື ທີ່ຮຽກວ່າ AEC ກັບປະເທດໃນອາຊຽນຕາເວັນອອກສ່ຽງໃຕ້ໂດຍມີເປົ້າໝາຍເພື່ອສ້າງຄວາມເປັນປຶກແຜ່ນ ແລະ ສ້າງຄວາມເຂັ້ມແຂງທາງດ້ານການສື່ສານໂດຍການກຳນົດໃຫ້ໃຊ້ພາສາອັງກິດເປັນພາສາກາງໃນການສື່ສານ ເພາະສະນັ້ນ ຖ້ານັກສຶກສາບໍ່ມີຄວາມສາມາດໃນການໃຊ້ພາສາອັງກິດບໍ່ວ່າຈະທາງດ້ານການເວົ້າ , ການຟັງ , ການອ່ານ ແລະ ການຂຽນຈະພົບຄວາມຫຍຸ້ງຍາກໃນການສື່ສານວຽກງານຕ່າງໆ ເພາະສະນັ້ນທາງກະຊວງສຶກສາທິການ ແລະ ກິລາຈຶ່ງເຫັນໄດ້ເຖິງຄວາມສຳຄັນຂອງພາສາອັງກິດ ຈຶ່ງໄດ້ຈັດການຮຽນການສອນໂດຍເນັ້ນໃຫ້ນັກສຶກສາໃຊ້ທັກສະການການເວົ້າ , ການຟັງ , ການອ່ານ ແລະ ການຂຽນໃຫ້ໄດ້ໃນລະດັບດີ.

ການອ່ານເປັນຂະບວນການຮຽນຮູ້ຢ່າງໜຶ່ງທີ່ຈະຕ້ອງດຳເນີນການຈັດກິດຈະກຳໃຫ້ນັກຮຽນໄດ້ຮຽນຮູ້ຈາກປະສົບການຈິງ ຝຶກການປະຕິບັດໃຫ້ເຮັດໄດ້, ຄິດເປັນ, ເຮັດເປັນ ແລະ ຮັກການອ່ານ ແລະເກີດໄຝ່ຮູ້ຢ່າງຕໍ່ເນື່ອງ (ນາງສາດ ທັດສະນີ ເທດຕ້ອມ, 2552,ອ້າງຈາກພະຣາດບັນຍັດການສຶກສາແຫ່ງຊາດໄທ ພສ 2542:24, ໜ້າ. 3) ການອ່ານເປັນເຄື່ອງມືສຳຄັນໃນການສຶກສາຄົ້ນຫາຄວາມຮູ້ ຄົນທີ່ມີທັກສະໃນການອ່ານຍ່ອມໄດ້ປຽບສາມາດນຳໄປໃຊ້ໃນຊີວິດປະຈຳວັນໄດ້ເຊັ່ນ: ການຄົ້ນຄ້ວາຫາຄວາມຮູ້ເພີ່ມເຕີມຈາກໜັງສືພິມຕ່າງໆ(ສະນິດ ຕັ້ງທະວີ.2426:35) ຈຶ່ງເຫັນໄດ້ວ່າຜູ້ທີ່ມີນິໄສຮັກການອ່ານ ແລະ ມີທັກສະໃນການອ່ານຍ່ອມສະແວງຫາຄວາມຮູ້ ແລະ ສຶກສາຮ່ຳຮຽນໄດ້ຢ່າງມີປະສິດທິພາບສາມາດນຳຄວາມຮູ້ທີ່ໄດ້ຈາກການອ່ານໄປໃຊ້ໃນການເວົ້າເປັນຢ່າງດີ ໄວແມນ (Wiseman 1992:2) ເວົ້າວ່າການສອນອ່ານພາສາອັງກິດໃຫ້ນັກຮຽນທີ່ມີຄວາມຮູ້ດ້ານການອ່ານຕ່ຳນັ້ນຄູຄວນຈະຫາທັກສະການອ່ານພາສາອັງກິດໃນດ້ານໂຄງສ້າງທາງພາສາ ແລະ ການຫາຄວາມໝາຍຂອງຄຳສັບນຳອີກເພາະຄວາມຮູ້ນຳເລື່ອງດັ່ງກ່າວເປັນອົງປະກອບທີ່ສຳຄັນທີ່ຈະຊ່ວຍໃຫ້ຜູ້ອ່ານປະສົບຄວາມສຳເລັດໃນການອ່ານເພື່ອຄວາມເຂົ້າໃຈໄດ້ແຕ່ນັກຮຽນກຸ່ມດັ່ງກ່າວຈະບໍ່ສາມາດຊ່ວຍເຫຼືອຕົວເອງໄດ້ໃນເລື່ອງເຫຼົ່ານີ້, ສ່ວນຂັ້ນຕອນຂອງ ຮາດເລ (Hadley.1996:195-200) ໄດ້ເວົ້າວ່າ ການຝຶກຫັດການອ່ານເປັນເລື່ອງຈຳເປັນສຳຫຼັບນັກຮຽນທີ່ຮຽນພາສາອັງກິດເປັນພາສາທີ່ສອງ ຫຼື ເປັນພາສາຕ່າງປະເທດ. ການສອນທັກສະການອ່ານຄວນສອນຫຼັງຈາກນັກຮຽນໄດ້ອ່ານເນື້ອຫາທັງໝົດໄປແລ້ວ ແລະ ສອນສະເພາະໂຄງສ້າງທາງພາສາ ແລະ ການຫາຄວາມໝາຍຂອງຄຳສັບທີ່ຈຳເປັນຕໍ່ການອ່ານເນື້ອຫາດັ່ງກ່າວເທົ່ານັ້ນ.

ຈາກຂະບວນການດັ່ງກ່າວຂ້າງເທິງນີ້ວິທີສິດສອນການອ່ານ ແລະ ການຝຶກທັກສະການອ່ານແມ່ນມີຄວາມສຳຄັນ ແລະ ຈຳເປັນຕໍ່ການຮຽນຮູ້ພາສາອັງກິດຂອງຜູ້ຮຽນ ສະນັ້ນສິ່ງສຳຄັນຄູຄວນພັດທະນາການສິດສອນ

ຄຸນປະໂຫຍດຂອງສື່ການສອນ ສື່ການສອນມີຄຸນປະໂຫຍດຫຼາຍຕໍ່ຄູ ແລະ ນັກຮຽນ, ຄູສາມາດປະຢັດເວລາໃນການສອນແລະນອກຈາກນັ້ນຄູສາມາດສື່ເຖິງຄວາມໝາຍຂອງບົດຮຽນທີ່ຈະສອນເຮັດໃຫ້ນັກຮຽນສາມາດເຂົ້າໃຈບົດຮຽນໄດ້ງ່າຍຂຶ້ນ, ນອກຈາກນັ້ນສື່ການສອນຍັງສາມາດສ້າງໃຫ້ນັກຮຽນມີຄວາມສົນໃຈໃນຮຽນ, ເຮັດໃຫ້ນັກຮຽນມີຄວາມກະຕືລືລົ້ນຕໍ່ການຮຽນບໍ່ເຮັດໃຫ້ນັກຮຽນເບື່ອໜ່າຍ.

ຈາກປະສົບການໃນການສອນວິຊາ: ESP III ຊັ້ນປີທີ 4 ຫ້ອງ 4 ກ ປະລິນຍາຕີ ສາຍພາສາອັງກິດ ໄດ້ສັງເກດ ນັກສຶກສາສ່ວນຫຼາຍບໍ່ມີສ່ວນຮ່ວມໃນຂະບວນການຮຽນ-ການສອນ, ຂາດທັກສະໃນການອ່ານເຮັດໃຫ້ນັກຮຽນອ່ານບໍ່ເປັນ ຫຼື ບໍ່ສາອາດອ່ານພາສາອັງກິດໄດ້ເຊັ່ນ: ນັກຮຽນບໍ່ສາມາດອ່ານຄຳສັບ, ບົດເລື່ອງກ່ຽວກັບ Economic Cooperation in Laos ໄດ້, ມີແຕ່ຈຳນວນໜ້ອຍໜຶ່ງທີ່ສາມາດອ່ານໄດ້ຄ່ອງແຄ້ວ ເຊິ່ງຈະກໍ່ໃຫ້ເກີດມີບັນຫາໃນການດຳເນີນການສິດສອນ ເຖິງວ່າຫຼັກສູດຈະໃຫ້ຄວາມສຳຄັນໃນທັກສະການອ່ານຫຼາຍກໍ່ຕາມຄວາມເປັນຈິງເຫັນວ່ານັກຮຽນສ່ວນຫຼາຍມີບັນຫາໃນການອ່ານພາສາອັງກິດ (ທິບພະວັນ ມາແສງ , 2541)ຈາກວິໄຈໄດ້ກ່າວໄວ້ວ່ານັກຮຽນຍັງຂາດຄວາມສົນໃຈ ແລະ ແຮງຈູງໃນການຮຽນ ບໍ່ເຫັນຄວາມສຳຄັນ ແລະ ຄຸນປະໂຫຍດໃນການຮຽນພາສາອັງກິດ ເຮັດໃຫ້ບໍ່ສາມາດນຳຄວາມຮູ້ໄປໃຊ້ໃນຊີວິດປະຈຳວັນ ເຮັດໃຫ້ເກີດທັດສະນະຄະຕິບໍ່ດີຕໍ່ພາສາອັງກິດໃນດ້ານການສອນຂອງຄູໂດຍສະເພາະທັກສະອ່ານສ່ວນຫຼາຍແລ້ວເລີ່ມການຮຽນທັກສະລະດັບຕໍ່າມາກ່ອນຈະເຮັດໃຫ້ເກີດຄວາມບົກຜ່ອງໃນຄວາມສຳພັນລະຫວ່າງພາສາ ແລະ ຄວາມຄິດຂອງນັກຮຽນ ພາຍຫຼັງອ່ານແລ້ວ ແລະ ທັງເປັນບົດອ່ານໃນຊັ້ນຮຽນຂາດຄວາມໜ້າສົນໃຈບໍ່ສາມາດເຊື່ອມໂຍງໄປສູ່ຄວາມເປັນຈິງໃນຊີວິດປະຈຳວັນ ແລະ ນັກຮຽນບໍ່ສາມາດເລືອກ ຫຼື ມີຕົວເລືອກອື່ນໃນບົດອ່ານເຮັດໃຫ້ບໍ່ເປັນປະໂຫຍດຕໍ່ການຮຽນຮູ້.

ເມື່ອໄດ້ສຶກສາເຖິງຄວາມສຳຄັນ ແລະ ບັນຫາຂອງການຮຽນການສອນທັກສະການອ່ານພາສາອັງກິດທີ່ກ່າວມານັ້ນສະແດງໃຫ້ເຫັນວ່າການຮຽນພາສາອັງກິດຕ້ອງໄດ້ເພີ່ມທະວີຄວາມສຳຄັນຂຶ້ນຕໍ່ເນື່ອງ ຜູ້ສອນຄວນເນັ້ນຂະບວນການສອນການສ້າງທັກສະການອ່ານ ແລະ ທັກສະການຝຶກການອ່ານໃຫ້ແກ່ນັກຮຽນກະກຽມ ແລະ ເລືອກສື່ການສອນໃຫ້ສອດຄ່ອງກັບເນື້ອໃນ ແລະ ຄວາມແຕກຕ່າງຂອງຜູ້ຮຽນ ເຄື່ອງມືດັ່ງກ່າວຈະສົ່ງຜົນຕໍ່ການຮຽນຂອງພວກເຂົາດີຂຶ້ນ ແລະ ທັງເປັນການຊ່ວຍໃນການຈັດກິດຈະກຳການຮຽນ-ການສອນໃນເລື່ອງນີ້ມີປະສິດທິຜົນສູງຂຶ້ນໃນຂັ້ນຕໍ່ໄປ.

## 1.2 ຈຸດປະສົງຂອງການວິໄຈ

1) ເພື່ອປຽບທຽບຜົນການຮຽນກ່ອນ ແລະ ຫຼັງການໃຊ້ແບບຝຶກທັກສະການອ່ານຂອງນັກສຶກສາສາຍພາສາອັງກິດ ລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018

2) ເພື່ອພັດທະນາແບບຝຶກທັກສະການອ່ານພາສາອັງກິດໃຫ້ມີປະສິດທິພາບຕາມເກນ 80/80 ຂອງນັກສຶກສາ ສາຍພາສາອັງກິດ ລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018

## 1.3. ສົມມຸດຖານການວິໄຈ

- ຫຼັງການໃຊ້ແບບຝຶກທັກສະການອ່ານ ນັກສຶກສາສາຍພາສາອັງກິດ ລະບົບ 12+4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ມີຜົນຄະແນນດີຂຶ້ນ
- ແບບຝຶກທັກສະການອ່ານພາສາອັງກິດທີ່ຜູ້ວິໄຈສ້າງຂື້ນມີປະສິດທິພາບຕາມເກນທີ່ກຳນົດໄວ້80/80

## 1.4. ຂອບເຂດຂອງການວິໄຈ

### 1.4.1. ປະຊາກອນ ແລະ ກຸ່ມຕົວຢ່າງ

**ກ. ປະຊາກອນ**

ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນນັກສຶກສາສາຍພາສາອັງກິດລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ເຊິ່ງມີນັກສຶກສາທັງໝົດ 25 ຄົນ

**ຂ. ກຸ່ມຕົວຢ່າງ**

ກຸ່ມຕົວຢ່າງທີ່ນຳມາສຶກສາຄັ້ງນີ້ ນັກສຶກສາສາຍພາສາອັງກິດລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ນັກຮຽນທັງໝົດ 25 ຄົນ

**ຄ. ເນື້ອໃນທີ່ຈະເຮັດການວິໄຈ.**

ການພັດທະນາທັກສະການອ່ານພາສາອັງກິດໂດຍການນຳໃຊ້ແບບເຝິກທັກສະການອ່ານສຳລັບນັກສຶກສາສາຍພາສາອັງກິດລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ມີທັງໝົດ 3 ຊຸດ ດັ່ງນີ້:

- ການອ່ານ ແລະ ຈັບຄູ່ລະຫວ່າງຄຳສັບ ແລະ ນິຍາມສັບ
- ອ່ານເລື່ອງ ແລະ ຕອບຄຳຖາມ
- ອ່ານເລື່ອງ ແລະ ຕື່ມຕຳສັບໃສ່ບ່ອນວ່າງ

**ງ. ຂອບເຂດທາງດ້ານຕົວປ່ຽນ.**

- ການນຳໃຊ້ແບບຝຶກທັກສະການອ່ານພາສາອັງກິດ
- ຄວາມສາມາດໃນການອ່ານພາສາອັງກິດຂອງນັກສຶກສາສາຍພາສາອັງກິດລະບົບ 12 + 4 ປະລິນຍາຕີ ປີທີ 4.

## 1.5. ນິຍາມສັບສະເພາະ

- ການພັດທະນາການອ່ານ: ໝາຍເຖິງການປ່ຽນແປງພຶດຕິກຳການອ່ານຂອງຜູ້ຮຽນເພື່ອໃຫ້ຜູ້ຮຽນເກີດມີຄວາມຮູ້, ຄວາມຄິດ ແລະ ເກີດຄວາມເຂົ້າໃຈເລື່ອງທີ່ອ່ານຖືກກັບເລື່ອງທີ່ຜູ້ຂຽນ.
- ການອ່ານ: ແມ່ນການອ່ານຄຳສັບກ່ຽວກັບ Economic ແລະ ອ່ານເລື່ອງ
- ທັກສະການອ່ານ: ໝາຍເຖິງການອ່ານເປັນຂະບວນການທີ່ຕ້ອງຝຶກຝົນຢ່າງມີລະບົບເພາະການອ່ານເປັນທັກສະທີ່ສາມາດຝຶກໄດ້ ການຝຶກເຮັດໃຫ້ມີຄວາມສາມາດໃນການອ່ານເພີ່ມຂຶ້ນ.

- ແບບຝຶກທັກສະ: ໝາຍເຖິງສິ່ງທີ່ສ້າງຂຶ້ນມາເພື່ອເສີມສ້າງທັກສະໃຫ້ແກ່ຜູ້ຮຽນ, ມີລັກສະນະເປັນແບບຝຶກຫັດໃຫ້ນັກຮຽນໄດ້ເຮັດກິດຈະກຳໂດຍມີຈຸດມຸ່ງໝາຍເພື່ອພັດທະນາຄວາມສາມາດໃນການອ່ານພາສາອັງກິດຂອງນັກສຶກສາໃຫ້ດີຂຶ້ນ.

## 1.6. ປະໂຫຍດທີ່ຄາດວ່າຈະໄດ້ຮັບ.

- ຜົນການຮຽນກ່ອນ ແລະ ຫຼັງນຳໃຊ້ແບບຝຶກທັກສະການອ່ານພາສາອັງກິດສຳລັບນັກສຶກສາສາຍພາສາອັງກິດລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນດີຂຶ້ນ
- ແບບຝຶກທັກສະແບບຝຶກທັກສະການອ່ານພາສາອັງກິດທີ່ຜູ້ວິໄຈສ້າງຂຶ້ນມີປະສິດທິພາບຕາມເກນທີ່ກຳນົດໄວ້ 80/80
- ນຳເອົາບົດຮຽນທີໄດ້ຈາກການວິໄຈໄປນຳໃຊ້ເປັນແນວທາງໃນການອ່ານເພື່ອເພີ່ມປະສິດທິພາບທາງການຮຽນວິຊາພາສາອັງກິດໃຫ້ສູງຂຶ້ນໃນກອບຂອງການວິໄຈ.

# ບົດທີ 2
# ແນວຄິດທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງ

## 2.1. ໃນການວິໄຈຄັ້ງນີ້ຜູ້ວິໄຈໄດ້ສຶກສາຄົ້ນຄວ້າເອກະສານທີ່ທີ່ກ່ຽວຂ້ອງກັບການພັດທະນາອ່ານໂດຍນຳໃຊ້ແບບເຝິກທັກສະ ດັ່ງນີ້:

2.1.1 ຄວາມໝາຍຂອງການອ່ານ

2.1.2 ຄວາມສຳຄັນຂອງການອ່ານ

2.1.3 ປະເພດຂອງການອ່ານ

2.1.4 ຄຸນປະໂຫຍດຂອງການອ່ານ

2.1.5 ທັກສະການອ່ານ

2.1.6 ຈຸດມຸ່ງໝາຍໃນການອ່ານ

2.1.7 ວິທີສອນການອ່ານ

2.1.8 ການວັດ ແລະ ປະເມີນຜົນດ້ານການອ່ານ

2.1.9 ການວັດ ແລະ ປະເມີນຜົນດ້ານການອ່ານ

2.1.10 ປະເພດການຈັດກິດຈະກຳສົ່ງເສີມການອ່ານ

2.1.11 ຫຼັກການສ້າງແບບເຝິກທັກສະ

2.1.12 ຮູບແບບຂອງການເຝິກທັກສະ

2.1.13 ລັກສະນະຂອງແບບເຝິກທັກສະທີ່ດີ

## 2.2. ຄວາມໝາຍຂອງການອ່ານ.

ການອ່ານ ໝາຍເຖິງການແປຄວາມໝາຍຂອງຕົວອັກສອນທີ່ອ່ານອອກມາເປັນຄວາມຮູ້ຄວາມຄິດ ແລະ ເກີດຄວາມເຂົ້າໃຈເລື່ອງທີ່ອ່ານຄືກັນກັບເລື່ອງທີ່ຜູ້ຂຽນ , ຜູ້ອ່ານສາມາດນຳເອົາຄວາມຮູ້, ຄວາມຄິດ ຫຼື ເນື້ອໃນຈາກເລື່ອງທີ່ອ່ານໄປໃຊ້ໃຫ້ເກີດປະໂຫຍດ.

ການອ່ານເປັນທັກສະສຳຄັນໃນການຮຽນພາສາ, ການອ່ານເປັນຂະບວນການທີ່ຕ້ອງເຝິກຝົນຢ່າງເປັນລະບົບເພາະການອ່ານເປັນທັກສະທີ່ສາມາດເຝິກໄດ້, ການເຝິກເຮັດໃຫ້ມີຄວາມສາມາດໃນການອ່ານເພີ່ມຂຶ້ນຫຼາຍຕາມລະດັບຂອງການອ່ານ. ການອ່ານອອກ ຫຼື ອ່ານໄດ້ເປັນການອ່ານຕາມຕົວອັກສອນ ແລະ ຕົວສະກົດເທົ່ານັ້ນແຕ່ອາດອອກສຽງບໍ່ຖືກຕ້ອງ ຫຼື ຜູ້ອ່ານອາດຈະບໍ່ເຂົ້າໃຈຂໍ້ຄວາມທີ່ອ່ານເຖິງວ່າເຂົ້າໃຈແຕ່ກໍ່ອາດຈະບໍ່ພຽງພໍ ຫຼື ອາດຈະເກີດເຂົ້າໃຈຜິດກໍ່ໃຫ້ເກີດຄວາມສ່ຽງກັບຜູ້ອ່ານເອງໄດ້. ສ່ວນການອ່ານເປັນຄືການອ່ານຢ່າງມີປະສິດທິພາບ, ມີຄວາມສາມາດໃນການອ່ານໄດ້ຖືກຕ້ອງ, ອ່ານແລ້ວຕີຄວາມໝາຍໄດ້ສາມາດນຳໄປໃຊ້ໃຫ້ເປັນປະໂຫຍດໃນຊີວິດປະຈຳວັນໄດ້(ສະວີວັນ ຄູຫາພິມັນ, 2542:16-17)

## 2.3. ຄວາມສຳຄັນຂອງການອ່ານ.

ການອ່ານມີຄວາມສຳຄັນຕໍ່ຊີວິດມະນຸດຕັ້ງແຕ່ເກີດຈົນໃຫຍ່ ແລະ ຈົນເຖິງໄວແກ່ຊະລາ ການອ່ານເຮັດໃຫ້ຮູ້ຂ່າວສານຂໍ້ມູນຕ່າງໆ ທົ່ວໂລກຊຶ່ງປັດຈຸບັນເປັນໂລກຂອງຂໍ້ມູນຂ່າວສານຕ່າງໆທົ່ວໂລກເຮັດໃຫ້ຜູ້ອ່ານມີຄວາມສຸກມີຄວາມຫວັງ ແລະ ມີຄວາມຢາກຮູ້ຢາກເຫັນອັນເປັນຄວາມຕ້ອງການຂອງມະນຸດທຸກຄົນ. ການອ່ານມີປະໂຫຍດຕໍ່ການພັດທະນາຕົນເອງຄືພັດທະນາການສຶກສາ, ພັດທະນາອາຊີບ ແລະ ພັດທະນາຄຸນນະພາບຂອງຊີວິດເຮັດໃຫ້ເປັນຄົນທັນສະໄໝທັນຕໍ່ເຫດການ ແລະ ມີຄວາມຢາກຮູ້ຢາກເຫັນ.ການທີ່ຈະພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງໄດ້ຕ້ອງອາໃສປະຊາຊົນທີ່ມີຄວາມຮູ້ຄວາມສາມາດເຊິ່ງຄວາມຮູ້ຕ່າງໆກໍ່ໄດ້ມາຈາກການອ່ານທັງນັ້ນ.

## 2.4. ປະເພດຂອງການອ່ານ

ທິພະວັນ ມາແສງ (2532) ແລະ ສະວິວັນ ບຸນຍະການຈົນ (2523, ອ້າງເຖິງໃນ ລົມໂຊຍ ດ່ານຊຸນທົດ, 2544) ໄດ້ແບ່ງປະເພດການອ່ານເປັນ 2 ປະເພດ ຄື: ການອ່ານອອກສຽງ ແລະ ການອ່ານໃນໃຈ.

- ການອ່ານໃນໃຈ ຄືການແປຄວາມໝາຍຂອງຕົວອັກສອນອອກມາເປັນຄວາມຄິດໂດຍກົງ ໂດຍຜູ້ອ່ານມີຈຸດມຸ່ງໝາຍຈະຈັບໃຈຄວາມຢ່າງວອງໄວ ເຂົ້າໃຈ ແລະ ຮູ້ເລື່ອງໄວຢ່າງຖືກຕ້ອງ. ການອ່ານໃນໃຈຊ່ວຍໃຫ້ເຂົ້າໃຈບົດຄວາມໄດ້ໄວກວ່າການອ່ານອອກສຽງເພາະຜູ້ອ່ານບໍ່ຈຳເປັນຕ້ອງແບ່ງສະໝອງໄວ້ເພື່ອແປຄວາມຄິດອອກມາເປັນສຽງບາດເມື່ອຍກໍ່ຢຸດພັກໄດ້. ຫຼັກສຳຄັນຂອງການອ່ານໃນໃຈ ຄື ການອ່ານດ້ວຍການເບິ່ງຕົວໜັງສືການເຄື່ອນຍ້າຍສາຍຕາຈາກຄຳວັກທຳອິດໄປສູ່ຄຳວັກສຸດທ້າຍ, ເມື່ອອ່ານຈົບຫຍໍ້ໜ້າໜຶ່ງຄວນຢຸດຄິດເລັກນ້ອຍເພື່ອສະຫຼຸບຄວາມຄິດເຫັນວ່າຫຍໍ້ໜ້າທີ່ອ່ານຈົບລົງເວົ້າກ່ຽວກັບຫຍັງ ແລະ ເນື້ອຄວາມສຳຄັນຢູ່ໃສ ແລະ ນຳຄວາມຄິດຄວາມເຂົ້າໃຈທີ່ໄດ້ນັ້ນໄປໃຊ້ໃຫ້ເປັນປະໂຫຍດ.
- ການອ່ານອອກສຽງ ເປັນການອ່ານທີ່ຕ້ອງການຄວາມຖືກຕ້ອງໃນການອ່ານອອກສຽງ ສຽງສູງຕໍ່າຕາມຈັງຫວະການຢຸດວັກຕອນໃຫ້ຖືກຕ້ອງຊັດເຈນເປັນຂະບວນການຕໍ່ເນື່ອງລະຫວ່າງສາຍຕາ,ສະໝອງ ແລະ ການເປັ່ງສຽງອອກທາງຊ່ອງປາກ ນັ້ນຄື ສາຍຕາຈະຕ້ອງຈັບຈ້ອງຕົວອັກສອນ ແລະ ເຄື່ອງໝາຍຕ່າງໆ ທີ່ຂຽນໄວ້ແລ້ວສະໝອງຈະຕ້ອງປະມວນໃຫ້ເປັນຖ້ອຍຄຳ ຈາກນັ້ນຈິ່ງເປັ່ງສຽງອອກມາ ການອ່ານອອກສຽງຈະຕ້ອງກ່ຽວຂ້ອງກັບຜູ້ຟັງນຳເພາະເປັນວິທີການສື່ຄວາມໝາຍໃຫ້ເກີດຄວາມເຂົ້າໃຈກັນໄດ້ ພາລະກິດຂອງຜູ້ອ່ານຄືອ່ານບົດເລື່ອງທີ່ມີຜູ້ຂຽນໄວ້ແລ້ວ ຖ່າຍທອດໄປສູ່ຜູ້ຟັງ ໂດຍຕ້ອງພະຍາຍາມຮັກສາເອກະສານເກົ່າໄວ້ໃຫ້ໄດ້ຢ່າງສົມບູນທີ່ສຸດ.

## 2.5. ຄຸນປະໂຫຍດຂອງການອ່ານ

ຄຸນປະໂຫຍດຂອງການອ່ານມີດັ່ງນີ້:

2.5.1. ເຮັດໃຫ້ມີຄວາມຮູ້ໃນດ້ານວິຊາການຕ່າງໆ ອາດເປັນຄວາມຮູ້ທົ່ວໄປ ຫຼື ອາດເປັນຄວາມຮູ້ສະເພາະດ້ານໃດກໍ່ໄດ້ເຊັ່ນ: ການອ່ານຕຳລາຂະແໜງຕ່າງໆ ໜັງສືຄູ່ມື ໜັງສືອ່ານປະກອບໃນໜ້າທີ່ວຽກງານ ຕ່າງໆ ເປັນຕົ້ນ

2.5.2. ເຮັດໃຫ້ຮູ້ທັນໂລກທັນເຫດການ, ການອ່ານໜັງສືພິມຂໍ້ມູນຂ່າວສານຕ່າງໆ ໃນສັງຄົມທັງພາຍໃນ ແລະ ຕ່າງປະເທດແລ້ວ ຍັງຮູ້ຂ່າວກິລາ, ຂ່າວບັນເທີງ, ບົດຄວາມວິຈາລະນາຍານຕະຫຼອດຈົນຮອດການໂຄສະນາສິນຄ້າຕ່າງໆອີກ ເຊິ່ງມີປະໂຫຍດຫຼາຍໃນການປັບຄວາມເປັນຢູ່ໃຫ້ເໝາະສົມສອດຄ່ອງກັບສະພາບແວດລ້ອມໃນຂະນະນັ້ນ.

2.5.3. ເຮັດໃຫ້ຄົ້ນຫາຄໍາຕອບທີ່ຕ້ອງການໄດ້ການອ່ານໜັງສືຈະຊ່ວຍຕອບຄໍາຖາມທີ່ເຮົາຂ້ອງໃຈ ສິ່ງໄສຕ້ອງການຮູ້ໄດ້ເຊັ່ນ: ອ່ານພົດຈະນານຸກົມເພື່ອຫາຄວາມໝາຍຂອງຄໍາ, ອ່ານໜັງສືກົດໝາຍເມື່ອຕ້ອງການຮູ້ຂໍ້ປະຕິບັດ ແລະ ອ່ານໜັງສືຄູ່ມືແນະນໍາວິທີຮຽນເພື່ອຕ້ອງການປະສົບຄວາມສໍາເລັດໃນການຮຽນເປັນຕົ້ນ.

2.5.4. ເຮັດໃຫ້ເກີດຄວາມເພີດເພີນ ການອ່ານໜັງສືທີ່ມີເນື້ອໃນດີ ໜ້າສົນໃຈ ຍ່ອມເຮັດໃຫ້ຜູ້ອ່ານມີຄວາມສຸກ,ຄວາມເພີດເພີນຕາມເລື່ອງນັ້ນໆ, ຜ່ອນຄາຍຄວາມຕຶງຄຽດ ແລະ ຍັງເປັນການຍົກລະດັບຈິດໃຈຂອງຜູ້ອ່ານສູງຂຶ້ນອີກ

2.5.5. ເຮັດໃຫ້ເກີດມີທັກສະ ແລະ ພັດທະນາໃນການອ່ານ ຜູ້ອ່ານໜັງສືສະໝ່ໍາສະເໝີຍອມເກີດຄວາມຊໍານານໃນການອ່ານ ສາມາດອ່ານໄດ້ໄວ ເຂົ້າໃຈເລື່ອງທີ່ອ່ານໄດ້ງ່າຍ ຈັບໃຈຄວາມໄດ້ຢ່າງຖືກຕ້ອງ ເຂົ້າໃຈປະເດັນສໍາຄັນຂອງເລື່ອງ.

2.5.6. ເຮັດໃຫ້ຊີວິດມີພັດທະນາການເປັນຊີວິດທີ່ສົມບູນ: ຜູ້ອ່ານຫຼາຍຍ່ອມຮູ້ເລື່ອງຕ່າງໆຫຼາຍ ເກີດຄວາມຮູ້ຄວາມຄິດທີ່ຫຼາກຫຼາຍກ້ວາງໄກເຮັດໃຫ້ຊີວິດມີຄຸນຄ່າ.

2.5.7. ເຮັດໃຫ້ມີມະນຸດສໍາພັນດີ ແລະ ເສີມສ້າງບຸກຄະລິກກະພາບ : ອ່ານຫຼາຍຍ່ອມຮັບຮູ້ຫຼາຍ ມີຂໍ້ມູນຕ່າງໆທີ່ສະສົມໄວ້ຫຼາຍສາມາດຖ່າຍທອດຄວາມຮູ້ໃຫ້ຄໍາແນະນໍາແກ່ຜູ້ອື່ນໃນທາງທີກໍ່ໃຫ້ເກີດປະໂຫຍດໄດ້.

## 2.6. ທັກສະການອ່ານ

ບຸດ ແລະ ເຮິນເນີ (Bush and Huebner 1970:99-110)ໄດ້ແຍກທັກສະການອ່ານສະເພາະຕາມລໍາດັບການຮຽນຮູ້ດັ່ງນີ້:

2.6.1. ທັກສະກ່ຽວກັບຄໍາສັບ ( Meaningful Vocabulary Skill )ປະກອບດ້ວຍທັກສະຍ່ອຍໆຄື: ຈື່ຄໍາສັບ, ວິເຄາະ, ຄວາມໝາຍ, ການໃຊ້ວັດຈະນານຸກົມ, ຮາກສັບ.

2.6.2. ທັກສະສະເພາະໃນການເຂົ້າໃຈ (Specific Comprehension Skill)ປະກອບດ້ວຍທັກສະດັ່ງຕໍ່ໄປນີ້: ເຊື່ອມໂຍງເລື່ອງທີ່ອ່ານກັບປະສົບການເດີມ, ເລືອກໃຈຄວາມສໍາຄັນ, ຄົ້ນຫາລາຍລາຍລະອຽດທີ່ສໍາຄັນ, ຕິດຕາມແລະ ຄາດຄະເນລໍາດັບຂອງເຫດການ, ຄາດການລ່ວງໜ້າ, ມີຄວາມຮູ້ສຶກປະທັບໃຈ, ເຂົ້າເຖິງອາລົມ ແລະ ຄວາມຮູ້ສຶກສາ, ປະຕິບັດຕາມຄໍາສັ່ງ, ລະບຸ ປະເມີນ ແລະ ໃຊ້ຂໍ້ມູນທີ່ມີຄວາມສອດຄ່ອງກັນ, ສະຫຼຸບໃຈຄວາມ

2.6.3. ທັກສະວິເຄາະລະຫວ່າງການອ່ານ(Analysis Skill during Reading)ປະກອບດ້ວຍທັກສະຍ່ອຍໆຄື: ການບົ່ງຊີ້ຮູບແບບການຮຽບຮຽງເນື້ອໃນຫຍໍ້ຂອງຜູ້ຮຽນ, ປະໂຫຍກໃຈຄວາມສໍາຄັນ, ຄໍາປິດສະໜາບອກແນວຄວາມຄິດຂອງເລື່ອງ.

2.6.4. ທັກສະບົ່ງບອກຮູບແບບຂອງການຂຽນຂອງຜູ້ຂຽນ(Determing Author's Pattern of Writing Skill) ປະກອບດ້ວຍທັກສະຍ່ອຍຄື: ບົດນໍາ, ໃຈຄວາມສໍາຄັນ, ການອະທິບາຍປະກອບ, ບົດສະຫຼຸບ.

2.6.5. ທັກສະການປະເມີນເນື້ອຫາ (Evaluating Content Skill) ປະກອບດ້ວຍທັກສະຍ່ອຍຄື: ຕີຄວາມໝາຍຂໍ້ແທ້ຈິງ, ເຊື່ອມໂຍງກັບປະສົບການເດີມເພື່ອຕັດສອນ.

2.6.6. ທັກສະການອ່ານຢ່າງສ້າງສັນ(Creative Reading Skill)ປະກອບດ້ວຍທັກສະຍ່ອຍຄື: ຕີຄວາມຈຸດມຸ່ງໝາຍຂອງຜູ້ຂຽນ, ສຶກສາທັກທັດສະນະຄະຕິຂອງຜູ້ຂຽນ, ແຍກແຍະຂໍ້ແທ້ຈິງອອກຈາກເລື່ອງແຕ່ງ, ສຶກສາການໃຊ້ຄໍາໂຄສະນາຊັກຈູງ.

## 2.7. ຈຸດມຸ່ງໝາຍໃນການອ່ານ

ນັກພາສາສາດ ແລະ ຜູ້ຊ່ຽວຊານທາງດ້ານພາສາໄດ້ແບ່ງຈຸດມຸ່ງໝາຍຂອງການອ່ານອອກດັ່ງລຸ່ມນີ້: ພັນທິພາ ຫຼາຍເລີດບຸນ (2535) ສີມພອນ ມັນຕະສູດ (2534) ແລະ ຊຸລີ ອິນມັ່ນ (2533) ມີຄວາມຄິດເຫັນທີ່ສອດຄ້ອງກັນວ່າ ຈຸດມຸ່ງໝາຍຂອງການອ່ານຄື່:

2.7.1. ອ່ານເພື່ອຮັບຮູ້

2.7.2. ອ່ານເພື່ອຄວາມຄິດ

2.7.3. ການອ່ານເພື່ອຄວາມບັນເທີງ

2.7.4. ອ່ານເພື່ອຫາຄວາມຄິດແປກໃໝ່

2.7.5. ການອ່ານເພື່ອປັບປຸງບຸກຄະລິກກະພາບ

2.7.6. ອ່ານເພື່ອສະໜອງຄວາມຕ້ອງການອື່ນໆ

## 2.8. ວິທີສິດສອນການອ່ານ

2.8.1. ກິດຈະກໍານໍາເຂົ້າສູ່ການອ່ານ(Pre-reading) ການທີ່ຜູ້ຮຽນຈະອ່ານໄດ້ຢ່າງເຂົ້າໃຈຄວນຕ້ອງມີຂໍ້ມູນບາງສ່ວນກ່ຽວກັບເລື່ອງທີ່ຈະອ່ານໂດຍຄູຜູ້ສອນອາດໃຊ້ກິດຈະກໍານໍາໃຫ້ຜູ້ຮຽນໄດ້ມີຂໍ້ມູນບາງສ່ວນເພື່ອຊ່ວຍສ້າງຄວາມເຂົ້າໃຈໃນເລື່ອງກ່ອນເລີ່ມຕົ້ນອ່ານເລື່ອງທີ່ກໍານົດໃຫ້ ໂດຍທົ່ວໄປມີ 2 ຂັ້ນຕອນຄື:

- ຂັ້ນ Personalization ເປັນຂັ້ນສົນທະນາຖາມ ຕອບລະຫວ່າງຄູກັບນັກຮຽນ ຫຼື ນັກຮຽນກັບນັກຮຽນເພື່ອທົບທວນຄວາມບົດຮຽນເກົ່າ ແລະ ກຽມຮັບຄວາມຮູ້ໃໝ່ຈາກການອ່ານ.

- ຂັ້ນ Predicting ເປັນຂັ້ນທີ່ໃຫ້ຜູ້ຮຽນຄາດເດົາກ່ຽວກັບເລື່ອງທີ່ຈະອ່ານ ໂດຍອາດໃຊ້ຮູບພາບ ແຜ່ນພູມອື່ນໆທີ່ກ່ຽວກັບເລື່ອງທີ່ຈະໄດ້ອ່ານແລ້ວນຳໄປສົນທະນາ ຫຼື ອະທິບາຍຫາຄາຕອບກ່ຽວກັບພາບນັ້ນໆ.

2.8.2 ກິດຈະກຳລະຫວ່າງການອ່ານ ຫຼື ກິດຈະກຳຂະນະທີ່ສອນອ່ານ (While reading) ເປັນກິດຈະກຳໃຫ້ຜູ້ຮຽນໄດ້ຝຶກປະຕິບັດໃນຂະນະທີ່ອ່ານ ກິດຈະກຳນີ້ໃຊ້ທົດສອບກ່ອນອ່ານ ແຕ່ເປັນການຝຶກທັກ ສະ ການອ່ານເພື່ອຄວາມເຂົ້າໃຈ, ກິດຈະກຳທີ່ຈັດໃນຂະນະຝຶກອ່ານ ຄວນເປັນປະເພດຕໍ່ໄປນີ້:

- Matching ຄື ອ່ານແລ້ວຈັບຄູ່ຄຳສັບກັບຄຳຈຳກັດຄວາມ ຫຼື ຈັບຄູ່ປະໂຫຍກເນື້ອເລື່ອງກັບພາບແຜ່ນພູມ.
- Ordering ຄື ອ່ານແລ້ວຈັດລຽງຮູບພາບ ແຜ່ນພູມ ຕາມເນື້ອເລື່ອງທີ່ອ່ານ ຫຼື ຈັດລຽງປະໂຫຍກແຕ່ລະຕອນ (Sentences) ຕາມລຳດັບເລື່ອງທີ່ຈັດລຽງເນື້ອຫາແຕ່ລະຕອນ (Paragraph) ຕາມລຳດັບຂອງເນື້ອເລື່ອງ
- Completing ຄືອ່ານແລ້ວເຕີມຄຳສຳນວນປະໂຫຍກຂໍ້ຄວາມລົງໃນພາບ ແຜ່ນພູມ ແລະອື່ນໆຕາມເລືອງທີ່ອ່ານ.
- Correcting ຄື ອ່ານແລ້ວແກ້ໄຂຄຳສຳນວນປະໂຫຍກ ຂໍ້ຄວາມໃຫ້ຖືກຕາມເນື້ອເລື່ອງທີ່ໄດ້ອ່ານ.

2.8.3. ກິດຈະກຳຫຼັງການອ່ານ (Post-reading) ເປັນກິດຈະກຳທີ່ເຮັດໃຫ້ຜູ້ຮຽນໄດ້ຝຶກການໃຊ້ພາສາໃນລັກສະນະທັກສະສຳພັນເພີ່ມຂຶ້ນຈາກການອ່ານແລ້ວ ໂດຍອາດຝຶກການແຂ່ງຂັນກ່ຽວກັບຄຳສັບສຳນວນ ໄວຍາກອນ ຈາກເລື່ອງທີ່ໄດ້ອ່ານ ແລະ ເປັນການທົບທວນຄວາມຮູ້ ແລະຄວາມຖືກຕ້ອງຂອງການອ່ານ.

## 2.9. ຫຼັກການຈັດກິດຈະກຳການອ່ານ

ໄພພັນ ອິນທະນິນ (2546,ນ.90) ໄດ້ໃຫ້ຄວາມໝາຍຂອງການຈັດກິດຈະກາສົ່ງເສີມການອ່ານໄວ້ວ່າ: ໃນອະດີດທີ່ຜ່ານມາຜູ້ຄົນຈະລະເລີຍໃນການສົ່ງເສີມການອ່ານກັບເດັກຢ່າງຈິ່ງຈັງພໍ່ແມ່ມັກຈະຄິດໄວ້ວ່າເປັນເລື່ອງຂອງທາງໂຮງຮຽນດັ່ງນັ້ນຈິ່ງຖ້າໃຫ້ເຂົ້າໂຮງຮຽນກ່ອນຈັ່ງຄ່ອຍເລີ່ມອ່ານໜັງສື ນອກຈາກນີ້ບາງຄົນຍັງຄິດວ່າການທີ່ເດັກຈະຮູ້ໃນການອ່ານນັ້ນຫຼືບໍ່ ເປັນທຳມະຊາດຂອງເດັກຈິ່ງປ່ອຍໄປຕາມທີ່ຈະເປັນໄປໃນທີ່ສຸດເມື່ອເລີ່ມຮຽນໜັງສືກໍ່ຖືກປູກຝັງໃຫ້ອ່ານແຕ່ໜັງສືຮຽນ ແລະ ເຮັດວຽກບ້ານທີ່ຄູມອບໃຫ້ທຸກວັນໂດຍບໍ່ມີແຜ່ນຮ່ວມກັນ ເດັກຈິ່ງຮູ້ສຶກເບື່ອນ່າຍໜັງສືຈົນກາຍເປັນນິໄສ

ວິລະວັນ ວັນໂທ (2545,ນ.67) ເວົ້າວ່າ ກິດຈະກຳສົ່ງເສີມການອ່ານເປັນວຽກງານຂອງຫ້ອງສະໝຸດຈະຕ້ອງຈັດຂຶ້ນເພື່ອຊັກຈູງສົ່ງເສີມໃຫ້ຜູ້ມາໃຊ້ຫ້ອງສະໝຸດມີຄວາມເຂົ້າໃຈກ່ຽວກັບໜັງສື ແລະ ຮູ້ໜັງສື.

## 2.10. ປະເພດການຈັດກິດຈະກຳສົ່ງເສີມການອ່ານ

ອຸໄທວັນ ຊິດສູງເນີນ(2533,ນ.22-23) ໄດ້ສະຫຼຸບປະເພດການຈັດກິດຈະກຳການອ່ານໄວ້ດັ່ງນີ້:

2.10.1. ການເລົ່ານິທານ

2.10.2. ການເລົ່າເລື່ອງຈາກໜັງສື

2.10.3. ການແນະນຳໜັງສື

2.10.4. ການສົນທະນາກ່ຽວກັບໜັງສື

2.10.5. ການໂຕ້ວາທີກ່ຽວກັບໜັງສື

2.10.6. ການຈັດທຳລາຍຊື່ໜັງສືທີ່ໜ້າສົນໃຈ

2.10.7. ການອ່ານໜັງສືໃຫ້ຟັງ

2.10.8. ເກມແຂ່ງຂັນກ່ຽວກັບໜັງສື

2.10.9. ການສະແດງລະຄອນຈາກເລື່ອງໃນໜັງສື

## 2.11. ການວັດ ແລະ ປະເມີນຜົນດ້ານການອ່ານ

ເພື່ອໃຫ້ການອ່ານມີປະສິດທິພາບ ຄູຜູ້ສອນຈຳເປັນຕ້ອງມີການວັດ ແລະ ປະເມີນຜົນຄວາມຮູ້ຄວາມສາມາດວ່າມີຄວາມກ້າວໜ້າພຽງຢູ່ຕະຫຼອດເວລາ ການວັດ ແລະ ປະເມີນຜົນຂອງເດັກຈຶ່ງມີປະໂຫຍດຫຼາຍ.

ນິບເຈົ້າ ບຸຍມາພິລາ (2540) ກ່າວວ່າການປະເມີນຜົນການອ່ານຢ່າງຖືກຕ້ອງຈຳເປັນຕ້ອງອາໃສເຄື່ອງມືປະເມີນຜົນການອ່ານຕໍ່ໄປນີ້: ການໃຊ້ຂໍ້ສອບມີທັງແບບອັດຕະໄນ ແລະ ປາລະໄນ ແລະ ການໃຊ້ແບບບັນທຶກວັດພຶດຕິກຳຈາກການສັງເກດ ຫຼື ສຳພາດ.

**ຄວາມໝາຍຂອງແບບຝຶກ**

ແບບຝຶກເປັນສື່ການສອນທີ່ເສີມສ້າງທັກສະການຮຽນຮູ້ຂອງຜູ້ຮຽນ ຈາກການສຶກສາເອະສານກ່ຽວກັບແບບຝຶກທັກສະພົບວ່າ: (ວິສາ ຈັດຕິວັດ, 2543)ກ່າວວ່າແບບຝຶກຫັດເປັນເອກະສານປະກອບການສອນເຊິ່ງໝາຍເຖິງເອກະສານທີ່ຊ່ວຍໃຫ້ຄູສອນພາສາອັງກິດໃຫ້ກັບຜູ້ຮຽນ

ກັນເທີ ແລະ ຄະນະ (Gunter, 1990) ກ່າວວ່າ ແບບຝຶກມັກໃຊ້ໃນການໃຫ້ນັກຮຽນຝຶກຮຽນດ້ວຍຕົນເອງ ແລະ ແບບຄວນຈະມີການແນະນຳໃນການປະຕິບັດກິດຈະກຳແກ່ນັກຮຽນດ້ວຍການໃຫ້ຕົວຢ່າງກ່ອນຈາກນັ້ນຈຶ່ງໃຫ້ນັກຮຽນເຮັດດ້ວຍຕົນເອງ ຫຼັງຈາກນັ້ນເຮັດສຳເລັດແລ້ວຄູ ແລະ ນັກຮຽນຄວນປະພິປາຍ ແລະ ແກ້ຂໍ້ຂ້ອງໃຈໃນຄຳຖາມແລະ ຄຳຕອບຂອງແບບຝຶກຮ່ວມກັນ

ສະຫຼຸບໄດ້ວ່າແບບຝຶກຄືເຄື່ອງມືທາງການຮຽນຂອງຜູ້ຮຽນທີ່ເນັ້ນໃຫ້ຜູ້ຮຽນໄດ້ຝຶກທັກສະໃດໜຶ່ງດ້ວຍຕົນເອງເພື່ອໃຫ້ມີຄວາມສາມາດ ແລະ ຄຳຊຳນິຊຳ ຫຼັງຈາກຮຽນທິດສະດີແລ້ວແຕ່ວ່າຄູຄວນມີຄຳຊີ້ແຈ້ງລະອຽດ ແລະ ພ້ອມທັງໃຫ້ຕົວຢ່າງ.

## 2.12. ຫຼັກການສ້າງແບບຝຶກທັກສະ

ສິ່ງສໍາຄັນທີ່ຄວນຄໍານຶ່ງເຖິງການສ້າງຄືຂັ້ນຕອນ ແລະ ຫຼັກການສ້າງຊຶ່ງ Seel and Glasgow (1990) ໄດ້ສະເໜີແນະໄວ້ວ່າ ໃນການຈັດສະຖານະການທາງການຮຽນ-ການສອນນັ້ນ ສາມາດກໍານົດຂອບເຂດຈາກຫຼັກສູດໂດຍກໍານົດຈາກໜ່ວຍຮຽນຍ່ອຍໆ ໄປສູ່ໜ່ວຍການຮຽນໃຫຍ່ແຕ່ຢ່າງໃດກໍ່ຕາມໃນການອອກແບບການສອນ ຫຼື ການສ້າງແບບເຝິກຄວນຄໍານຶງເຖິງອົງປະກອບດັ່ງຕໍ່ໄປນີ້:

1. ການຄັດເລືອກສ້າງແບບເຝິກຕ້ອງອີງໃສ່ຈຸດປະສົງລາຍວິຊາ.
2. ວິທີໃຊ້ໃນການສອນຕ້ອງອີງໃສ່ທິດສະດີ ແລະ ຜົນການວິໄຈທີ່ມີຜູ້ເຮັດໄວ້ແລ້ວ.
3. ການວັດຕ້ອງອີງໃສ່ພຶດຕິກໍາການຮຽນຮູ້.
4. ຮູ້ຈັກນໍາເທັກໂນໂລຢີໃຊ້ປະກອບເພື່ອໃຫ້ແບບຝຶກມີປະສິດທິພາບ ແລະ ຄຸ້ມຄ່າ.

ນອກຈາກນີ້ ບັອກ (Bock, 1993) ໄດ້ສະເໜີຫຼັກໃນການສ້າງແບບຝຶກດັ່ງນີ້:

1. ກ່ອນທີ່ຈະສ້າງແບບເຝິກຈະຕ້ອງກໍານົດໂຄງຮ່າງໄວ້ກ່ອນວ່າຈະຂຽນ ແບບເຝິກກ່ຽວກັບເລື່ອງຫຍັງມີຈຸດປະສົ່ງຢ່າງໃດ.
2. ສຶກສາເອກະສານທີ່ກ່ຽວຂ້ອງກັບເລື່ອງທີ່ຈະສ້າງແບບຝຶກ.
3. ຂຽນຈຸດປະສົງພຶດຕິກໍາ ແລະ ເນື້ອໃນໃຫ້ສອດຄ່ອງກັນ.
4. ແບ່ງກິດຈະກໍາອອກເປັນກິດຈະກໍາຍ່ອຍໂດຍຄໍານຶ່ງເຖິງຄວາມເໝາະສົມຂອງຜູ້ຮຽນ ຫຼື ງານທີ່ນັກຮຽນຕ້ອງປະຕິບັດຈາກງ່າຍໄປຫາຍາກ.
5. ກໍານົດອຸປະກອນທີ່ຈະໃຊ້ໃນແຕ່ລະຕອນໃຫ້ເໝາະສົມກັບແບບຝຶກ.
6. ກໍານົດເວລາທີ່ຈະໃຊ້ໃນແບບເຝິກໃນແຕ່ລະຕອນໃຫ້ເໝາະສົມ.
7. ຄວນປະເມີນຜົນກ່ອນ ແລະ ຫຼັງ.

ຈາກທີ່ກ່າວມາທັງໝົດຫຼັກການສ້າງແບບຝຶກນັ້ນຕ້ອງຄໍານຶ່ງເຖິງຫຼັກສູດຈຸດປະສົງການຮຽນຮູ້ຈຶ່ງຄັດເລືອກບັນຫາໃຫ້ສອດຄ່ອງກັບຫຼັກສູດ ແລະ ຈຸດປະສົງ ເພື່ອນໍາໄປສ້າງແບບຝຶກ ຊຶ່ງຈະຕ້ອງມີຮູບແບບທີ່ຫຼາກຫຼາຍ ແລະ ສາມາດສ້າງຄວາມເຂົ້າໃຈໃຫ້ກັບຜູ້ຮຽນ ແລະ ກິດຈະກໍາທີ່ເລືອກໃຊ້ໃນແບບເຝິກຕ້ອງສອດຄ່ອງກັບຮູບແບບການສອນ.

## 2.13. ຮູບແບບຂອງການຝຶກທັກສະ

ສົມເດດ ສີແສງ, ສຸບັນທາ ສູນທິບຣະເສຣິດ (2543 ອ້າງເຖິງໃນ 2545) ກ່າວວ່າຮູບແບບຂອງແບບເຝິກຄວນມີຫຼາກຫຼາຍເພື່ອປ້ອງກັນບໍ່ໃຫ້ຜູ້ຮຽນເກີດຄວາມເບື່ອໜ່າຍບໍ່ຢາກເຮັດ ແລະ ໄດ້ສະເໜີຮູບແບບຂອງການຝຶກໄວ້ດັ່ງນີ້:

1. ແບບຖືກຜິດ ເປັນແບບເຝິກທີ່ເປັນປະໂຫຍກບອກເລົ່າໃຫ້ຜູ້ຮຽນອ່ານແລ້ວເລືອກໃສ່ເຄື່ອງໝາຍຖືກ ຫຼື ຜິດຕາມຄວາມຄິດຂອງຜູ້ຮຽນ.

2. ແບບຈັບຄູ່ ເປັນແບບເຝິກທີ່ປະກອບດ້ວຍຄຳຖາມ ຫຼື ຕົວບັນຫາຊຶ່ງເປັນຕົວຍືນໄວ້ໃນສິ້ນຊ້າຍມື ໂດຍມີທີ່ວ່າງໄວ້ໜ້າຂໍ້ ເພື່ອໃຫ້ຜູ້ຮຽນເລືອກຄຳຕອບທີ່ກຳນົດໄວ້ໃນສົມມຸດພົບວ່າມືມາຈັບຄູ່ກັບຄຳຖາມໃຫ້ລຽນກັນໂດຍໃຊ້ໝາຍເລກຄຳຕອບໄປວ່າງໄວ້ທີ່ວ່າງໜ້າຂໍ້ຄຳຖາມ.
3. ແບບຕື່ມຄຳ ຫຼື ແບບຕື່ມຂໍ້ຄວາມເປັນແບບເຝິກທີ່ມີຂໍ້ຄວາມໄວ້ໃຫ້ແຕ່ຈະເວັ້ນຊ່ອງວ່າງໄວ້ໃຫ້ຜູ້ຮຽນຕື່ມຄຳ ຫຼື ຂໍ້ຄວາມທີ່ຂາດຫາຍໄປຊຶ່ງຄຳທີ່ນຳມາຕື່ມອາດໃຫ້ຕື່ມຢ່າງອິດສະຫຼະ ຫຼື ກຳນົດຕົວເລືອກໃຫ້ຕື່ມກໍ່ໄດ້.
4. ແບບຫຼາຍຕົວເລືອກ ເປັນແບບເຝິກເຊິ່ງແບບທົດສອບ ໂດຍມີ 2 ສ່ວນ ຄື: ສ່ວນທີ່ເປັນຄຳຖາມຊຶ່ງຈະຕ້ອງເປັນປະໂຫຍກຄຳຖາມທີ່ສົມບູນຊັດເຈນ ສ່ວນທີ່ 2 ເປັນຕົວເລືອກ ຄືຄຳຕອບຊຶ່ງອາດມີ 3-4 ຕົວເລືອກກໍ່ໄດ້ ຕົວເລືອກທັງໝົດຈະມີຕົວເລືອກທີ່ຖືກຕ້ອງທີ່ສຸດພຽງຕົວດຽວສ່ວນທີ່ເຫລືອເປັນຕົວລວງ.
5. ແບບອັດຕະໄນ ຄືຄວນລຽງເປັນແບບຝຶກທີ່ມີຕົວຄຳຖາມ ຜູ້ຮຽນຂຽນບັນລະຍາຍຕອບຢ່າງເສລີ ບໍ່ຈຳກັດຄຳຕອບ ແຕ່ຈຳກັດໃນເລື່ອງເວລາ ອາດໃຊ້ໃນຮູບຄຳຖາມທົ່ວໄປ ຫຼື ເປັນຄຳສັ່ງໃຫ້ຂຽນເລື່ອງລາວຕ່າງໆ ກຳນົດເວລາທີ່ຈະໃຊ້ໃນແບບເຝິກແຕ່ລະຕອນໃຫ້ເໝາະສົມກໍ່ໄດ້.

## 2.14 ລັກສະນະຂອງແບບຝຶກທັກສະທີ່ດີ

(ກຸດຢາ ແສງເດດ, 2545)ກ່າວວ່າ ແບບຝຶກທີ່ດີຄວນມີລັກສະນະດັ່ງນີ້:

1. ກ່ຽວຂ້ອງກັບເລື່ອງທີ່ຮຽນມາແລ້ວ.
2. ເໝາະສົມກັບໄວລະດັບຊັ້ນຂອງຜູ້ຮຽນ.
3. ມີຄຳຊີ້ແຈງສັ້ນໆ ເພື່ອໃຫ້ເຂົ້າໃຈງ່າຍ.
4. ໃຊ້ເວລາທີ່ເໝາະສົມ.
5. ມີສິ່ງທີ່ໜ້າສົນໃຈ ແລະ ທ້າທາຍໃຫ້ສະແດງຄວາມສາມາດ.
6. ຄວນມີຂໍ້ສະເໜີແນະໃນການໃຊ້.
7. ມີໃຫ້ເລືອກຕອບຢ່າງຈຳກັດແລະຕອບຢ່າງເສລີ.
8. ຖ້າເປັນແບບເຝິກທີ່ຕ້ອງການໃຫ້ຜູ້ຮຽນສຶກສາດ້ວຍຕົນເອງແບບຝຶກຄວນມີຫຼາຍຮູບແບບ.
9. ຄວນໃຊ້ພາສາງ່າຍໆ ຝຶກໃຫ້ຄິດ ແລະ ສະໜຸກສະໜານ.

## ງານວິໄຈທີ່ກ່ຽວຂ້ອງ

ຈາກການສຶກສາເອກະສານທີ່ກ່ຽວຂ້ອງຜູ້ວິໄຈໄດ້ແບ່ງຫົວຂໍ້ຂອງງານວິໄຈອອກເປັນ 2 ດ້ານຄື: ການວິໄຈກ່ຽວກັບຍຸດທະວິທີການອ່ານ ແລະ ການນຳໃຊ້ແບບຝຶກທັກສະ.

### 1. ການວິໄຈກ່ຽວກັບຍຸດທະວິທີການອ່ານ( Reading stategy)

ຈາກການສຶກສາບົດວິໄຈທີ່ກ່ຽວຂ້ອງກັບຍຸດທະວິທີໃນການອ່ານຂອງຕ່າງປະເທດພົບວ່າມີສ່ວນກ່ຽວ

ຂ້ອງທາງການຮຽນ ໂດໃຊ້ຍຸດທະວິທີການອ່ານທີ່ມີຄວາມຫຼາກຫຼາຍເຊັ່ນ ການອ່ານຈັບໃຈຄວາມສຳຄັນ, ການໃຊ້ແຜນພູມຄວາມໝາຍ, ການເດົາຄວາມໝາຍສັບຈາກເລື່ອງ ເຮັດໃຫ້ມີການວິໄຈດັ່ງຕໍ່ໄປນີ້:

ປາຣະທັດ ແສນວິເສດ (2539) ໄດ້ປຽບທຽບຜົນສຳພັນທາງການອ່ານຈັບໃຈຄວາມພາສາອັງກິດຂອງນັກຮຽນຊັ້ນປະຖົມສຶກສາປີທີ 6 ລະຫວ່າງວິທີສອນໂດຍໃຊ້ເທັກນິກການສ້າງແຜນພູມຄວາມໝາຍກັບວິທີການສອນຕາມປົກະຕິໂດຍກຸ່ມຕົວຢ່າງເປັນນັກຮຽນຊັ້ນປະຖົມສຶກສາປີທີ 6 ພາກຮຽນທີ 2 ສົກສຶກສາ 2538 ໂຮງຮຽນ ບ້ານໂພງພາງ ເມືອງ ກຸສຸມານ ແຂວງ ສະກົນນະຄອນ ຈຳນວນ 64 ຄົນ ຊຶ່ງໄດ້ມາຈາກການສຸ່ມແບບເຈາະຈົງ ແລ້ວໃຊ້ວິທີການສຸ່ມໂດຍການຈັບສະຫຼາກເພື່ອແບ່ງນັກຮຽນເປັນກຸ່ມທົດລອງ ແລະ ກຸ່ມຄວບຄຸມ ກຸ່ມລະ 32 ຄົນເທົ່າກັນ ກຸ່ມທົດລອງໄດ້ຮັບການສອນອ່ານໂດຍໃຊ້ເທັກນິກການສ້າງແຜນພູມຄວາມໝາຍ ແລະ ກຸ່ມຄວບຄຸມ ໄດ້ຮັບການສອນໂດຍວິທີສອນແບບປົກກະຕິ ຜົນການວິໄຈພົບວ່າ ຜົນສຳພັນການອ່ານຈັບໃຈຄວາມພາສາອັງກິດຂອງນັກຮຽນໂດຍການໃຊ້ເທັກນິກການສ້າງແຜນພູມຄວາມໝາຍແຕກຕ່າງຈາກຜົນສຳພັນຂອງນັກຮຽນໂດຍໃຊ້ວິທີສອນປົກະຕິຢ່າງມີໃນສຳຄັນທາງສະຖິຕິລະດັບ 0.05.

ແຄນເທຣນ (Cantrell, 1997)ໄດ້ສຶກສາທັກສະການອ່ານ ແລະ ການຂຽນຂັ້ນພື້ນຖານຂອງນັກຮຽນລະດັບປະຖົມສຶກສາໃນລັດເຄນຕັກກີ້ ປະເທດສາຫະລັດອາເມລິກາ ໂດຍນຳໃຊ້ກຸ່ມຕົວຢ່າງ 2 ກຸ່ມ ກຸ່ມທຳອິດມີນັກຮຽນ 21 ຄົນ ຈາກ 4 ຫ້ອງຮຽນ ຊຶ່ງມີຄູຜູ້ສອນຈົບການສຶກສາໃນລະດັບສູງ ກຸ່ມທີ 2 ມີນັກຮຽນ 19 ຄົນ ຈາກ 4 ຫ້ອງຮຽນ ເຊິ່ງມີຄູທີ່ຈົບການສຶກສາໃນລະດັບທີ່ຕ່ຳກວ່າ ນຳເອົາຄະແນນການອ່ານ ແລະ ການຂຽນຂອງນັກຮຽນທີ່ໄດ້ ມາປຽບທຽບກັບດວ້ຍບັນທັດຖານທີ່ເປັນສາກົນໃນດ້ານທັກສະການອ່ານຈັບໃຈຄວາມໝາຍຄ່ອງ ການວິເຄາະຄຳ ແລະ ຄວາມສາມາດໃນການສ້າງສັນງານຂຽນດ້ອຍການທົດສອບ, ສັງເກດ ແລະ ສຳພາດຈາກການສຶກສາພົບວ່ານັກຮຽນທີ່ໄດ້ຮັບການສອນຈາກຄູທີ່ຈົບການສຶກສາໃນລະດັບສູງແຕກຕ່າງຈາກກຸ່ມຂອງນັກຮຽນທີ່ໄດ້ຮັບການສອນຈາກຄູທີ່ຈົບການສຶກສາໃນລະດັບຕ່ຳກວ່າໃນທຸກໆການວັດຂອງລະດັບການຮູ້ໜັງສືມີຄວາມແຕກຕ່າງກັນທາງໃນສຳຄັນໃນນຄະແນນ ການວັດ ທັກສະການວິເຄາະຄຳ ສ່ວນການຂຽນມີຄວາມແຕກຕ່າງຢ່າງມີໃນສຳຄັນທີ່ເຫັນໄດ້ຊັດ ທັງໃນເລື່ອງຄຸນນະພາບຂອງການຂຽນ ແລະ ການໃຊ້ພາສາ ສະແດງໃຫ້ເຫັນວ່ານັກຮຽນໃນຫ້ອງຮຽນທີ່ຮຽນກັບຄູທີ່ມີການສຶກສາໃນລະດັບສູງໄດ້ໃຊ້ໂປຼແກມ ການສອນທີ່ເໝາະສົມກວ່ານັກຮຽນທີ່ມີຄູຈົບການສຶກກສາໃນລະດັບຕ່ຳກວ່າຍິ່ງໄປກວ່ານັ້ນນັກຮຽນໃນກຸ່ມທີ່ມີຄູຈົບການສຶກສາໃນລະດັບສູງຈະປະສົບຄວາມສຳເລັດໃນການອ່ານແລະການຂຽນໃນລະດັບທີ່ສາມາດປຽບທຽບໄດ້ກັບມາດຕະຖານສາກົນ.

ລໍເຣ (Lawray. 1979:817-A) ໄດ້ສຶກສາຜົນສຳເລັດຂອງການໃຊ້ແບບເຝິກທັກສະກັບນັກຮຽນ ລະດັບ 1 ເຖິງລະດັບ 3 ຈຳນວນ 87 ຄົນ ພົບວ່ານັກຮຽນທີ່ໄດ້ຮັບການຝຶກໂດຍໃຊ້ແບບຝຶກທັກສະ ມີຄະແນນຫຼັງການຝຶກຫຼາຍກວ່າການສອບກ່ອນການຝຶກ.

(Mcpeake.1979:7199A, 1979 ) ແຕ່ເວລາ 12 ອາທິດບໍ່ພຽງພໍທີ່ຈະທຳໃຫ້ເກີດການເຊື່ອມໂຍງການຮຽນຮູ້ ໃນການສະກົດຄຳໄປສູ່ຄຳໃໝ່ທີ່ຍັງບໍ່ໄດ້ສຶກສາ ແລະ ຄະແນນນັກຮຽນຍິງສູງກວ່ານັກຮຽນຊາຍ. ນອກຈາກນີ້ການອ່ານຍັງມີຄວາມສຳພັນກັບຄວາມສາມາດໃນການສະກົດຄຳ.

## 2. ການວິໄຈກ່ຽວກັບການນຳໃຊ້ແບບຝຶກທັກສະ

(ວິໄລລັດ ວໍສຸຣີ, 2545)ສຶກສາການພັດທະນາແບບຝຶກທັກສະການອ່ານພາສາອັງກິດໂດຍໃຊ້ເອກະສານຈິ່ງກ່ຽວກັບທ້ອງຖິ່ນ ໃນລາຍວິຊາ ອ 0112 ສຳລັບນັກຮຽນຊັ້ນມັດທະຍົມປີທີ 6 ຮຽນພິບູນວິທະຍາໄລ ແຂວງ ລົບບຸຣີ ກຸ່ມຕົວຢ່າງຈຳນວນ 45 ຄົນ ຜົນການວິໄຈເຫັນວ່າ:

1. ປະສິດທິພາບຂອງແບບຝຶກທັກສະການອ່ານພາສາອັງກິດໂດຍໃຊ້ເອກະສານຈິ່ງກ່ຽວກັບທ້ອງຖິ່ນມີຄ່າເທົ່າກັບ 87,80/80,50.
2. ຄວາມສາມາດໃນການອ່ານພາສາອັງກິດຂອງນັກຮຽນຫຼັງການໃຊ້ແບບຝຶກເສີມທັກສະການອ່ານສູງກວ່າກ່ອນການໃຊ້ແບບຝຶກຢ່າງມີຈຸດສຳຄັນທາງສະຖິຕິທີ່ລະດັບ 0,05
3. ນັກຮຽນມີຄວາມຄິດເຫັນທີ່ດີຕໍ່ແບບຝຶກທັກສະການອ່ານພາສາອັງກິດໂດຍໃຊ້ເອກະສານຈິ່ງກ່ຽວກັບທ້ອງຖິ່ນທີ່ຜູ້ວິໄຈສ້າງຂຶ້ນ.

(ອໍລະຊອນ ວົງສາ, 2548)ໄດ້ສຶກສາການພັດທະນາກິດຈະກຳການຮຽນຮູ້ໃນກຸ່ມການຮຽນຮູ້ພາສາຕ່າງປະເທດ (ວິຊາພາສາອັງກິດ) ໂດຍໃຊ້ນິທານພື້ນບ້ານອີສານເປັນສື່ ສຳລັບນັກຮຽນຊັ້ນທີ 3 ( ຊັ້ນມັດທະຍົມປີທີ່ 2) ກຸ່ມເປົ້າໝາຍຈຳນວນ 35 ຄົນ ຜົນການວິໄຈເຫັນຜົນວ່າສຳເລັດທາງການຮຽນວິຊາພາສາອັງກິດຂອງນັກຮຽນຫຼັງຈົບການທົດລອງວົງຈອນຕາມແຜ່ນການຈັດການຮຽນຮູ້ໂດຍໃຊ້ນິທານພື້ນບ້ານອີສານເປັນສື່ຈຳນວນນັກຮຽນທີ່ເຫັນຜ່ານເກນຮ້ອຍລະ 70 ຂອງຄະແນນເຕັມ ຈຳນວນ 27 ຄົນ ຄິດເປັນຮ້ອຍລະ 77,14.

(ສຸຈິດຣາ ສາດຕົນວາຫາ )ໄດ້ການສຶກສາຜົນສຳເລັດທາງການຮຽນວິຊາພາສາອັງກິດຂອງນັກຮຽນຊັ້ນປະຖົມສຶກສາປີທີ 6 ໃນຊັ້ນຮຽນທີ່ມີການສອນແບບສື່ສານໂດຍມີນິທານເປັນອິງປະກອບ ກຸ່ມຕົວຢ່າງຄືນັກຮຽນຊັ້ນປະຖົມສຶກສາປີທີ 6 ຈຳນວນ 30 ຄົນ ແບ່ງເປັນກຸ່ມທົດລອງສ່ວນກຸ່ມຄວບຄຸມກໍ່ການສອນແບບສື່ສານທີ່ມີນິທານເປັນອິງປະກອບ ຈຳນວນ 3 ເລື່ອງ ໃນກຸ່ມທົດລອງສ່ວນກຸ່ມຄວບຄຸມກໍ່ການສອນຕາມຄູ່ມືຄູ ນິທານທີ່ເລືອກໃຊ້ເປັນນິທານຂອງຊົນຊາດອື່ນ ມີການສັງເກດພຶດຕິກຳລະຫວ່າງຮຽນທັງ 2 ກຸ່ມ ຜ່ານການວິໄຈສະຫຼຸບໄດ້ວ່ານັກຮຽນໃນກຸ່ມທົດລອງມີຜົນສຳເລັດທາງການຮຽນສູງກວ່າກຸ່ມຄວບຄຸມຊຶ່ງມີຄວາມແຕກຕ່າງກັນຢ່າງສຳຄັນທາງສະຖິຕິທີ່ລະດັບ.05 ສະແດງໃຫ້ເຫັນວ່າແນວທາງການຮຽນການສອນແບບສື່ສານໂດຍມີນິທານເປັນອິງປະກອບເປັນແນວການສອນທີ່ດີມີປະສິດທິພາບສົ່ງຜົນໃຫ້ນັກຮຽນມີຄວາມກ້າວໜ້າ ແລະ ພັດທະນາທັກສະທັງ 4 ດ້ານ ຈາກການສັງເກດພຶດຕິກຳໃນຂະນະທີ່ຮຽນພົບວ່ານັກຮຽນໃນກຸ່ມທົດລອງມີການສະແດງພຶດຕິກຳທີ່ຢູ່ໃນເກນທີ່ສູງກວ່ານັກຮຽນໃນກຸ່ມຄວບຄຸມທັງນີ້ເພາະນັກຮຽນໃນກຸ່ມທົດລອງມີຄວາມສົນໃຈຊື່ນມັກເຮັດໃຫ້ສາມາດເຮັດຄວາມເຂົ້າໃຈກັບບັນຫາທີ່ຮຽນໄດ້ດີ.

ຈາກການສຶກສາບົດຄົ້ນຄວ້າວິໄຈຕ່າງປະເທດສະຫຼຸບໄດ້ວ່າ: ແບບເຝິກທັກສະເປັນສື່ການຮຽນການສອນທີ່ສຳຄັນສຳລັບນັກຮຽນ ເຮັດໃຫ້ນັກຮຽນສົນໃຈບົດຮຽນ ເກີດຄວາມສະໜຸກສະໜານ, ເພີດເພີນ, ຊ່ວຍໃຫ້ຜູ້ຮຽນຮູ້ເຂົ້າໃຈບົດຮຽນ ເຮັດໃຫ້ການສອນຂອງຄູ ແລະ ການຮຽນຂອງນັກຮຽນມີປະສິດທິພາບ ແລະ ນັກຮຽນມີການພັດທະນາການທັກສະທາງພາສາໄດ້ດີຍິ່ງຂຶ້ນ.

# ບົດທີ 3
# ວິທີດຳເນີນການວິໄຈ

ການວິໄຈໃນຄັ້ງນີ້ຂ້າພະເຈົ້າໄດ້ເນັ້ນກ່ຽວກັບການພັດທະນາທັກສະການອ່ານໂດຍການນຳໃຊ້ແບບເຝິກທັກສະການອ່ານສຳລັບນັກສຶກສາ ສາຍພາສາອັງກິດ ລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ເປັນການວິໄຈສຳຫຼວດແບບທົດລອງມີຈຸດປະສົງເພື່ອເພື່ອປຽບທຽບຜົນການຮຽນກ່ອນ ແລະ ຫຼັງການໃຊ້ແບບຝຶກທັກສະການອ່ານຂອງນັກສຶກສາ ສາຍພາສາອັງກິດ ລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ແລະ ເພື່ອພັດທະນາແບບຝຶກທັກສະການອ່ານໃຫ້ມີປະສິດທິພາບຕາມເກນ 80/80 ຂອງນັກສຶກສາ ສາຍພາສາອັງກິດ ລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ເຊິ່ງມີວິທີການດຳເນີນຕາມຂັ້ນຕອນດັ່ງນີ້:

- ປະຊາກອນ ແລະ ກຸ່ມຕົວຢ່າງ
- ເຄື່ອງມື ແລະ ວິທີການສ້າງເຄື່ອງມື
- ການເກັບລວບລວມຂໍ້ມູນ
- ການວິເຄາະຂໍ້ມູນ
- ສະຖິຕິທີ່ນຳມາວິເຄາະຂໍ້ມູນ

## 3.1. ປະຊາກອນ ແລະ ກຸ່ມຕົວຢ່າງ

➢ **ປະຊາກອນ**

ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນນັກສຶກສາສາຍພາສາອັງກິດລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ເຊິ່ງມີນັກສຶກສາທັງໝົດ 25 ຄົນ ເຊິ່ງມີບັນຫາໃນການອ່ານພາສາອັງກິດ

➢ **ກຸ່ມຕົວຢ່າງ**

ການກຳນົດຕົວຢ່າງແມ່ນນັກສຶກສາສາຍພາສາອັງກິດລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ເຊິ່ງມີນັກສຶກສາທັງໝົດ 25 ຄົນ ເຊິ່ງໄດ້ການສຸ່ມເລືອກແບບເຈາະຈົງ (PurposiveSampling)ໂດຍການກຳນົດຂະໜາດຂອງກຸ່ມຕົວຢ່າງຕາຕະລາງສຳເລັດຮູບຂອງ (Krejcie and Morgan 1970:608)

## 3.2. ເຄື່ອງມື ແລະ ວິທີການສ້າງເຄື່ອງມື

ເຄື່ອງມືທີ່ໃຊ້ເຂົ້າໃນການວິໄຈປະກອບມີ:

- ບົດທົດສອບກ່ອນຮຽນ ແລະ ຫຼັງຮຽນ ຈຳນວນ 1 ຊຸດໆ ລະ 30 ຂໍ້.ເປັນແບບທົດສອບແບບປາລະໄນປະເພດເລືອກຕອບ 3 ຕົວເລືອກ ເພື່ອໃຊ້ທົດສອບກ່ອນ ແລະ ຫຼັງການໃຊ້ແບບຝຶກທັກສະການອ່ານພາສາອັງກິດ
- ແບບຝຶກທັກສະການອ່ານພາສາອັງກິດມີ 3 ຊຸດ ຊຸດລະ 10 ຂໍ້ ລວມມີ 30 ຂໍ້ໃນໜຶ່ງຊຸດເປັນແບບຝຶກປະເພດຈັບຄູ່ລະວ່າງຄຳສັບກັບນິຍາມ, ອ່ານ ແລະ ຕອບຄຳຖາມ, ອ່ານ ແລະ ຕື່ມຄຳສັບໃສ່ບ່ອນຫວ່າງ.

## 3.3. ການສ້າງ ແລະ ຫາຄຸນນະພາບຂອງເຄື່ອງມື

3.3.1 ສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງກັບສ້າງແບບຝຶກທັກສະການອ່ານ

3.3.2. ສຶກສາຫຼັກສູດ, ແບບຮຽນ ແລະ ຄູ່ມືຄູທີ່ກະຊວງສຶກສາອອກແບບຕາມຫຼັກສູດມັດທະຍົມສາຂາວິຊາພາສາອັງກິດ ປີ 2013 ຂອງ ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສ ປ ປ ລ

3.3.3. ດຳເນີນການສ້າງບົດສອນກ່ຽວກັບທັກສະການອ່ານຈຳນວນ 2 ບົດ

3.3.4. ສ້າງແບບຝຶກທັກສະການອ່ານພາສາອັງກິດ ຈຳນວນ 3 ຊຸດໆລະ 10 ຂໍ້ລວມມີ 30 ຂໍ້ໃນໜຶ່ງຊຸດ

3.3.5. ນຳເອົາແບບຝຶກໄປໃຫ້ທີ່ປຶກສາ ແລະ ຫົວໜ້າພາກວິຊາກວດສອບຄວາມເໝາະສົມຂອງເນື້ອໃນ, ເນື້ອໃນຄວາມຍາກງ່າຍ ເພື່ອທີ່ຈະນຳພັດທະນາແບບຝຶກທັກສະການອ່ານພາສາອັງກິດ

3.3.6. ປັບປຸງແກ້ໄຂຕາມຂໍ້ສະເໜີແນະ

3.3.7. ນຳເອົາແບບຝຶກທັກສະໄປທົດລອງໃຊ້ກັບກຸ່ມຕົວຢ່າງນັກສຶກສາສາຍພາສາອັງກິດລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ເຊິ່ງມີນັກສຶກສາທັງໝົດ 25 ຄົນ

## 3.4. ການສ້າງແບບທົດສອບວັດຜົນສຳເລັດທາງການຮຽນເລື່ອງທັກສະການອ່ານ:ຜູ້ສຶກສາຈະໄດ້ດຳເນີນຕາມລຳດັບດັ່ງນີ້ :

1. ສຶກສາແນວຄິດ, ທິດສະດີ, ຫຼັກເກນ ແລະ ວິທີສ້າງແບບທົດສອບວັດຜົນສຳເລັດຈາກເອກະສານທີ່ກ່ຽວຂ້ອງ.
2. ສຶກສາຫຼັກສູດ, ແບບຮຽນ ແລະ ຄູ່ມືຄູ ກ່ຽວກັບວິຊາ ESP III ຈາກຫຼັກສູດກະຊວງສຶກສາທິການ ແລະ ກິລາ.
3. ກຳນົດເນື້ອໃນ ແລະ ຈຸດປະສົງການຮຽນຮູ້ໃຫ້ສອດຄ່ອງກັບເນື້ອໃນ.
4. ບົດທົດສອບກ່ອນຮຽນ ແລະ ຫຼັງຮຽນ ຈຳນວນ 1 ຊຸດໆລະ 30 ຂໍ້.ເປັນແບບທົດສອບແບບປາລະໄນປະເພດເລືອກຕອບ 3 ຕົວເລືອກ
5. ນຳແບບທົດສອບທີ່ສ້າງຂຶ້ນ ສະເໜີໃຫ້ທີ່ປຶກສາ ແລະ ຫົວໜ້າພາກວິຊາກວດສອບຄວາມເໝາະສົມຂອງເນື້ອໃນ, ເນື້ອໃນຄວາມຍາກງ່າຍ

6. ນຳແບບທົດສອບໄປທົດລອງໃຊ້ກັບນັກຮຽນທີ່ບໍ່ແມ່ນກຸ່ມຕົວຢ່າງຄື:ນັກສຶກສາສາຍພາສາອັງກິດລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ເຊິ່ງມີນັກສຶກສາທັງໝົດ 25 ຄົນ
7. ນຳແບບທົດສອບທີ່ຜ່ານການປັບປຸງແກ້ໄຂແລ້ວໄປທົດລອງກັບກຸ່ມຕົວຢ່າງຄື:ນັກສຶກສາສາຍພາສາອັງກິດລະບົບ 12 + 4 ປະລິນຍາຕີ ປີທີ 4 ວິທະຍາໄລຄູສາລະວັນ ສົກຮຽນ 2017-2018 ເຊິ່ງມີນັກສຶກສາທັງໝົດ 25 ຄົນ

## 3.5. ການເກັບລວບລວມຂໍ້ມູນ

1. ທົດສອບກ່ອນຮຽນ (Pre-test) ດ້ວຍແບບທົດສອບວັດຜົນສຳເລັດທາງການຮຽນ
2. ດຳເນີນການຈັດກິດຈະກຳການຮຽນ - ການສອນ ມີການບັນທຶກຄະແນນລະຫວ່າງຮຽນເປັນລາຍບຸກຄົນໄວ້ທຸກຄັ້ງ.
3. ເມື່ອດຳເນີນການສອນປົກກະຕິແລ້ວແລ້ວໄດ້ດຳເນີນທົດສອບວັດຜົນສຳເລັດທາງການຮຽນ ຫຼັງການຮຽນ (Post-test) ກັບນັກຮຽນກຸ່ມຕົວຢ່າງ ໂດຍໃຊ້ແບບທົດສອບຊຸດດຽວກັບກ່ອນຮຽນ.

## 3.6. ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້

### ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນໂດຍນຳເອົາຂໍ້ມູນທີ່ໄດ້ມາວິເຄາະໂດຍນຳໃຊ້ຕາຕະລາງອະທິບາຍໂດຍຊອກຫາປະສິດທິພາບຂອງແບບຝຶກຫັກສະເຊິ່ງຄິດໄລ່ເປັນຄ່າສະເລ່ຍ ($\bar{x}$) ແລະ ເປີເຊັນ (%) ແລະ ປຽບທຽບຜົນຂອງນັກຮຽນ ພ້ອມທັງປຽບທຽບຄວາມແຕກຕ່າງຄະແນນສະເລ່ຍກ່ອນ ແລະ ຫຼັງຮຽນ($\bar{x}$).

### ສະຖິຕິໃນການວິເຄາະຂໍ້ມູນ.

ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນປະກອບມີດັ່ງນີ້:

1. ຊອກຫາຄ່າສະເລ່ຍ $\bar{x}$ ຂອງຄະແນນໃຊ້ສູດ ລ້ວນສາຍຍຸດ ແລະ ອັງຄະນາສາຍຍຸດ(2538) ແລະ %.

$$\bar{x} = \frac{\sum x}{N}$$

$\bar{x}$ ແທນຄ່າສະເລ່ຍ

$\sum x$ ແທນຜົນລວມຂອງຄະແນນທັງໝົດ

N ແທນນັກຮຽນກຸ່ມຕົວຢ່າງທັງໝົດ

$$P = \frac{X}{N} \times 100$$

2. ຊອກປະສິດທິພາບຂອງແບບເຝິກໂດຍນຳໃຊ້ສູດ $E_1 / E_2$ ຕາມເກນ 80/80

ສູດ

$$E_1 = \frac{\frac{\sum x}{N}}{A} \times 100$$

$E_1$ ແທນປະສິດທິພາບຂອງຂະບວນການຮຽນ.

$\sum x$ ແທນຄະແນນລວມລະຫວ່າງຮຽນ.

$N$ ແມ່ນຈຳນວນນັກຮຽນທັງໝົດ

A ແທນຄະແນນລວມຂອງແບບເຝິກທັງໝົດ

❖ ຊອກຫາປະສິດທິພາບຂອງການຮຽນ

$$E_2 = \frac{\frac{\sum y}{N}}{B} \times 100$$

$E_2$ ແທນ ປະສິດທິພາບຂອງການຮຽນ

$\sum y$ ແທນຄະແນນທັງໝົດຂອງແບບທົດສອບ

B ແທນ ຄະແນນເຕັ່ມຂອງການສອບຫຼັງຮຽນ

N ແທນ ຈຳນວນນັກຮຽນ

❖ ກຳນົດຄ່າຕາມເກນຂອງ ບຸນຊົມ ສີສະອາດ (2535:100) ດັ່ງລາຍລະອຽດດັ່ງນີ້:

- ຄະແນນ 9 - 10 ໝາຍເຖິງນັກຮຽນສາມາດໃນການອ່ານໄດ້ດີຫຼາຍ.
- ຄະແນນ 7 - 8 ໝາຍເຖິງນັກຮຽນສາມາດໃນການອ່ານໄດ້ດີ.
- ຄະແນນ 5 - 6 ໝາຍເຖິງນັກຮຽນສາມາດອ່ານໄດ້ປານກາງ.
- ຄະແນນ 3 - 4 ໝາຍເຖິງນັກຮຽນສາມາດອ່ານໄດ້ໜ້ອຍ.
- ຄະແນນ 0 - 2 ໝາຍເຖິງນັກຮຽນມີຄວາມສາມາດໃນການອ່ານໄດ້ໜ້ອຍທີ່ສຸດ.

# ບົດທີ 4

# ຜົນການວິເຄາະຂໍ້ມູນ

